# ການສະຫຼຸບສິດການກວດຄັດກອງການໄດ້ຍິນຂອງເດັກເກີດໃໝ່

ທ່ານບອກວ່າທ່ານບໍ່ຕ້ອງການໃຫ້ລູກຂອງທ່ານໄດ້ຮັບການກວດຄັດກອງການໄດ້ຍິນ.
ກະລຸນາແຈ້ງໃຫ້ທ່ານໝໍຂອງທ່ານຮູ້ວ່າແອນ້ອຍຂອງທ່ານຍັງບໍ່ໄດ້ຮັບການກວດຄັດກອງການໄດ້ຍິນ.

ແຜ່ນພັບນີ້ຈະໃຫ້ຂໍ້ເທັດຈິງທີ່ສຳຄັນກ່ຽວກັບການກວດຄັດກອງການໄດ້ຍິນ. ເຊິ່ງອະທິບາຍວິທີການທົດສອບ ແລະເປັນຫຍັງຈຶ່ງສຳຄັນສຳລັບແອນ້ອຍຂອງທ່ານ.

ຖ້າທ່ານຕ້ອງການໃຫ້ແອນ້ອຍໄດ້ຮັບການກວດຄັດກອງການໄດ້ຍິນໃນພາຍຫຼັງ ທ່ານສາມາດເຮັດໄດ້ເຊັ່ນກັນ. ກະລຸນາໂທຫາທ່ານໝໍຂອງລູກຂອງທ່ານ ຫຼື ໂທຟຣີໄດ້ທີ່ເບີ 1-877-388-5301 ເພື່ອສອບຖາມຂໍ້ມູນເພີ່ມເຕີມ.

## ມີແອນ້ອຍທີ່ສູນເສຍການໄດ້ຍິນຫຼາຍປານໃດ?

ການສູນເສຍການໄດ້ຍິນຂັ້ນຮຸນແຮງພົບໃນແອນ້ອຍປະມານ 2-4 ຄົນໃນ 1,000 ຄົນ. ປະມານ 50% ຂອງແອນ້ອຍທີ່ສູນເສຍການໄດ້ຍິນບໍ່ມີສັນຍານຫຼືປັດໃຈສ່ຽງ ເຊັ່ນ: ພະຍາດຮ້າຍແຮງ ຫຼື ປະຫວັດການເປັນຫູໜວກໃນຄອບຄົວ. ແອນ້ອຍບາງຄົນສູນເສຍການໄດ້ຍິນໃນພາຍຫຼັງຈາກການຕິດເຊື້ອຫູຊ້ຳແລ້ວຊ້ຳອີກ, ເຍື່ອຫຸ້ມສະໝອງອັກເສບ, ການບາດເຈັບທີ່ຫົວ ຫຼືອາການເຈັບປ່ວຍອື່ນໆ. ບາງຄັ້ງແອນ້ອຍສູນເສຍການໄດ້ຍິນໂດຍບໍ່ຮູ້ສາເຫດ.

## ເປັນຫຍັງຈຶ່ງຕ້ອງທົດສອບແອນ້ອຍ?

ການສູນເສຍການໄດ້ຍິນບໍ່ສາມາດເບິ່ງເຫັນໄດ້. ໃນປັດຈຸບັນ ເຕັກໂນໂລຢີເຮັດໃຫ້ສາມາດກວດພົບການສູນເສຍການໄດ້ຍິນໃນຊ່ວງຕົ້ນໆຂອງຊີວິດຂອງແອນ້ອຍໄດ້.

ເດືອນແລະປີທຳອິດຂອງຊີວິດຂອງເດັກນ້ອຍແມ່ນມີຄວາມສຳຄັນຫຼາຍສຳລັບການພັດທະນາທັກສະການສື່ສານ. ແອນ້ອຍທີ່ສູນເສຍການໄດ້ຍິນ ຫຼືຫູໜວກ ອາດຈະມີບັນຫາໃນການພັດທະນາທັກສະທາງພາສາປົກກະຕິ ຫຼືອາດຈະຮຽນໄດ້ບໍ່ດີໃນໂຮງຮຽນ. ດັ່ງນັ້ນ ການກວດພົບຄວາມສູນເສຍແຕ່ເນີ່ນໆ ແລະການໃຫ້ບໍລິການພິເສດແກ່ແອນ້ອຍແລະຄອບຄົວຈຶ່ງເປັນສິ່ງສຳຄັນ.

## ມີບາງສິ່ງບາງຢ່າງທີ່ສາມາດເຮັດໄດ້!

ຍິ່ງກວດພົບການສູນເສຍການໄດ້ຍິນຂອງເດັກນ້ອຍໄດໄວເທົ່າໃດ ກໍ່ສາມາດໃຫ້ຄວາມຊ່ວຍເຫຼືອໄດ້ໄວຂຶ້ນເທົ່ານັ້ນ. ການວິໄຈຄົ້ນຄວ້າຫຼ້າສຸດສະແດງໃຫ້ເຫັນວ່າການຊ່ວຍເຫຼືອໃນຊ່ວງເດືອນທຳອິດຂອງຊີວິດສາມາດສ້າງຄວາມແຕກຕ່າງໄດ້ຕະຫຼອດຊີວິດ. ແອນ້ອຍທີ່ບົກຜ່ອງດ້ານການໄດ້ຍິນ ຫຼືຫູໜວກ ແລະ ໄດ້ຮັບການບໍລິການແຊກແຊງ (ຄວາມຊ່ວຍເຫຼືອພິເສດ) ພາຍໃນອາຍຸ 6 ເດືອນ ມີແນວໂນ້ມທີ່ຈະພັດທະນາຄວາມສາມາດທາງດ້ານພາສາ ແລະການສື່ສານໃນອັດຕາດຽວກັນກັບແອນ້ອຍທີ່ມີການໄດ້ຍິນປົກກະຕິ. ເດັກນ້ອຍເຫຼົ່ານີ້ມີໂອກາດດທີ່ຈະປະສົບຄວາມສຳເລັດໃນໂຮງຮຽນເພີ່ມຫຼາຍຂຶ້ນ.

ສະຖາບັນກຸມານເວດອາເມຣິກາ (American Academy of Pediatrics) ແລະ ອົງກອນວິຊາຊີບອື່ນໆ ແນະນຳໃຫ້ມີການກວດຄັດກອງການໄດ້ຍິນສຳລັບເດັກເກີດໃໝ່ທຸກຄົນ ແລະຊຸກຍູ້ໃຫ້ມີການຕິດຕາມການໄດ້ຍິນຂອງເດັກຢ່າງໃກ້ຊິດຕະຫຼອດຫຼາຍປີທຳອິດ.

## ພວກເຮົາກວດຄັດກອງການໄດ້ຍິນແນວໃດ?

ການກວດຄັດກອງໃຊ້ເວລາພຽງແຕ່ສອງສາມນາທີໃນຂະນະທີ່ລູກຂອງທ່ານນອນຫຼັບ. ຈະເປີດສຽງຄ່ອຍໆ ຜ່ານຫູຟັງທີ່ຜະລິດຂຶ້ນມາສະເພາະສຳລັບແອນ້ອຍ. ການຕອບສະໜອງຂອງລູກທ່ານຕໍ່ກັບສຽງນັ້ນຈະຖືກວັດແທກໂດຍອັດຕະໂນມັດໂດຍການປ່ອຍສຽງສະທ້ອນຈາກໃນຫູ (OAE) ຫຼື ການກວດການໄດ້ຍິນຂອງເສັ້ນປະສາດການໄດ້ຍິນລະດັບກ້ານສະໝອງ (ABR).

ວິທີກວດຄັດກອງແບບງ່າຍໆໃນປັດຈຸບັນມີຄວາມໜ້າເຊື່ອຖືຫຼາຍ. ການກວດແອນ້ອຍທີ່ສູນເສຍການໄດ້ຍິນມັກຈະບໍ່ພາດ.

## ຈະເກີດຫຍັງຂຶ້ນກັບແອນ້ອຍຕໍ່ໄປ?

ຄວນໄດ້ຮັບການທົດສອບການໄດ້ຍິນຕາມຊ່ວງການເຕີບໃຫຍ່ຂອງແອນ້ອຍຂອງທ່ານ. ການກວດຄັດກອງການໄດ້ຍິນຂອງເດັກເກີດໃໝ່ແມ່ນຂັ້ນຕອນທຳອິດໃນການສັງເກດພັດທະນາການດ້ານການໄດ້ຍິນ, ການປາກເວົ້າ ແລະພາສາຂອງແອນ້ອຍຂອງທ່ານ. ການເອົາໃຈໃສ່ພັດທະນາການທາງພາສາແລະການປາກເວົ້າຂອງລູກຂອງທ່ານຖືເປັນສິ່ງສຳຄັນ.

ຂໍ້ມູນ "ຂັ້ນຕອນການໄດ້ຍິນ ແລະການປາກເວົ້າຕາມອາຍຸ" ໃນແຜ່ນພັບສະແດງເຖິງບາງສິ່ງທີ່ເດັກນ້ອຍສ່ວນຫຼາຍມັກຈະເຮັດໃນແຕ່ລະຊ່ວງອາຍຸ. ເມື່ອລູກຂອງທ່ານເຕີບໃຫຍ່ຂຶ້ນ ທ່ານສາມາດປຽບທຽບການກະທຳແລະການປາກເວົ້າຂອງເຂົາເຈົ້າກັບຕາມລາຍການໄດ້. ຖ້າທ່ານມີຄວາມກັງວົນກ່ຽວກັບການໄດ້ຍິນຂອງລູກຂອງທ່ານ ໃຫ້ຕິດຕໍ່ກັບທ່ານໝໍຂອງລູກຂອງທ່ານ ຫຼືຜູ້ໃຫ້ບໍລິການດ້ານການດູແລສຸຂະພາບທັນທີ.

## ໃຜເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍໃນການກວດຄັດກອງການໄດ້ຍິນ?

ໂດຍທົ່ວໄປປະກັນໄພຈະຄຸ້ມຄອງຄ່າໃຊ້ຈ່າຍໃນການກວດຄັດກອງການໄດ້ຍິນຂອງເດັກເກີດໃຫມ່. Medi-Cal ຈະຮັບຜິດຊອບຄ່າໃຊ້ຈ່າຍໃນການກວດຄັດກອງແອນ້ອຍທີ່ເຂົ້າເກນ.

# ຂັ້ນຕອນການໄດ້ຍິນແລະການປາກເວົ້າຕາມອາຍຸ

| ອາຍຸ | ຂັ້ນຕອນການໄດ້ຍິນແລະການປາກເວົ້າ |
|---|---|
| **ແຮກເກີດຫາ 3 ເດືອນ** | » ງຽບເມື່ອໄດ້ຍິນສຽງເວົ້າຫຼືສຽງທີ່ຄຸ້ນເຄີຍ<br>» ຕອບສະໜອງຕໍ່ສຽງດັງ, ສະດຸ້ງແບບແອນ້ອຍ, ກະພິບຕາ, ຢຸດດູດ, ຮ້ອງໄຫ້ ຫຼືຕື່ນຂຶ້ນມາ.<br>» ເຮັດສຽງຄ່ອຍໆໃນເວລາຕື່ນນອນ, ເຮັດສຽງກົ້ວຄໍແບບແອນ້ອຍ |
| **3 ຫາ 6 ເດືອນ** | » ຫັນສາຍຕາ ຫຼືຫັນຫົວຕາມສຽງ, ສຽງດເວົ້າ, ຂອງຫຼິ້ນທີ່ມີສຽງ, ສຽງໝາເຫົ່າ<br>» ເລີ່ມອອກສຽງ, "ກາ," "ອູ," "ບາ" ແລະສຽງ ພິ, ບີ, ເອັມ<br>» ຕອບສະໜອງຕໍ່ການປ່ຽນແປງໃນນ້ຳສຽງຂອງທ່ານ |
| **6 ຫາ 9 ເດືອນ** | » ຕອບສະຫນອງຊື່ຂອງຕົນເອງແລະເບິ່ງໃນເວລາທີ່ຖືກເອີ້ນ<br>» ເຂົ້າໃຈຄໍາງ່າຍໆ ເຊັ່ນ "ບໍ່", "ບາຍ-ບາຍ", "ນ້ຳໝາກໄມ້"<br>» ເວົ້າອໍ້ແອ້ ເຊັ່ນ "ດາ ດາ ດາ,""ມາ ມາ ມາ," "ບາ ບາ ບາ" |
| **9 ຫາ 12 ເດືອນ** | » ຕອບສະໜອງຕໍ່ທັງສຽງຄ່ອຍແລະສຽງດັງ<br>» ເວົ້າຊໍ້າຄໍາດຽວ ແລະຮຽນແບບສຽງສັດ<br>» ຊີ້ໄປຫາເຄື່ອງຫຼິ້ນ ຫຼືອາຫານທີ່ມັກ ເມື່ອບອກໃຫ້ເຮັດ |
| **12 ຫາ 18 ເດືອນ** | » ໃຊ້ຄໍາຕັ້ງແຕ່ 10 ຄໍາຂຶ້ນໄປ<br>» ປະຕິບັດຕາມຄໍາສັ່ງທີ່ໃຊ້ຄໍາເວົ້າງ່າຍໆ ເຊັ່ນ "ໄປເອົາບານມາ"<br>» ຊີ້ໄປຫາຄົນ ສ່ວນຕ່າງໆຂອງຮ່າງກາຍ ຫຼືຂອງຫຼິ້ນ ເມື່ອບອກໃຫ້ເຮັດ<br>» ໂຍກຕົວຕາມສຽງດົນຕີ |

| ອາຍຸ | ຂັ້ນຕອນການໄດ້ຍິນແລະການປາກເວົ້າ |
|---|---|
| **18 ຫາ 24 ເດືອນ** | » ໃຊ້ຄຳຕັ້ງແຕ່ 20 ຄຳຂຶ້ນໄປ<br>» ປະສົມຄຳຕັ້ງແຕ່ 2 ຄຳຂຶ້ນໄປ ເຊັ່ນ "ເອົານ້ຳໝາກໄມ້ອີກ," "ອັນນັ້ນແມ່ນຫຍັງ?"<br>» ໃຊ້ສຽງພະຍັນຊະນະຫຼາຍສຽງທີ່ຂຶ້ນຕົ້ນຄຳສັບ ເຊັ່ນ ບີ, ຈີ, ເອັມ<br>» ຟັງເລື່ອງແລະເພງທີ່ມີເນື້ອຫາງ່າຍໆ |
| **2 ຫາ 3 ປີ** | » ໃຊ້ປະໂຫຍກທີ່ປະກອບດ້ວຍຄຳ 2-3 ຄຳ<br>» ເມື່ອອາຍຸ 2 ປີ ຄົນອື່ນສາມາດເຂົ້າໃຈສິ່ງທີ່ເດັກເວົ້າໄດ້ເປັນບາງເວລາ (25%-50%)<br>» ເມື່ອອາຍຸ 3 ປີ ຄົນອື່ນສາມາດເຂົ້າໃຈສິ່ງທີ່ເດັກເວົ້າໄດ້ສ່ວນໃຫຍ່ (50%-75%)<br>» ປະຕິບັດຕາມຄຳສັ່ງສອງຂັ້ນຕອນ ເຊັ່ນ "ໄປເອົາບານມາ ແລ້ວວາງເທິງໂຕ໊ະ" |

## ສາມາດທົດສອບການໄດ້ຍິນໄດ້ໃນທຸກໄວ.

ເປົ້າໝາຍຂອງໂຄງການກວດຄັດກອງການໄດ້ຍິນຂອງເດັກເກີດໃໝ່ຂອງລັດຄາລິຟໍເນຍແມ່ນເພື່ອລະບຸແອນ້ອຍທີ່ສູນເສຍການໄດ້ຍິນ ແລະເຊື່ອມຕໍ່ເຂົາເຈົ້າໄປຫາບໍລິການຕ່າງໆພາຍໃນອາຍຸຫົກເດືອນ. ໂຄງການນີ້ມີສູນປະສານງານການໄດ້ຍິນທີ່ເຮັດວຽກກັບຄອບຄົວ, ຜູ້ໃຫ້ບໍລິການດ້ານການດູແລສຸຂະພາບ ແລະໂຮງໝໍເພື່ອຮັບປະກັນວ່າເດັກນ້ອຍຈະໄດ້ຮັບການບໍລິການທີ່ຈຳເປັນ.

ໂຄງການກວດຄັດກອງການໄດ້ຍິນຂອງເດັກເກີດໃໝ່ເກັບກຳຂໍ້ມູນກ່ຽວກັບການກວດຄັດກອງການໄດ້ຍິນຂອງລູກນ້ອຍຂອງທ່ານຕາມມາດຕາ 124119 ຂອງປະມວນກົດໝາຍສຸຂະພາບ ແລະຄວາມປອດໄພ. ສູນປະສານງານການໄດ້ຍິນອາດຈະໃຊ້ຂໍ້ມູນນີ້ເພື່ອຊ່ວຍເຫຼືອທ່ານແລະແອນ້ອຍຂອງທ່ານໃນການໄດ້ຮັບບໍລິການທີ່ທ່ານອາດຈຳເປັນ.
ສູນປະສານງານການໄດ້ຍິນອາດຈະຕິດຕໍ່ທ່ານກ່ຽວກັບການບໍລິການຕິດຕາມຜົນ.

**ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບໂຄງການກວດຄັດກອງການໄດ້ຍິນຂອງເດັກເກີດໃໝ່,**

- ກະລຸນາໂທໄປທີ່ເບີໂທຟຣີ 1-877-388-5301
- ຫຼືເຂົ້າໄປເບິ່ງພວກເຮົາໃນເວັບໄຊທີ່ www.dhcs.ca.gov/services/nhsp